# ວາລະສານ PCAP2

## PCAP2 NEWSLETTER

ສະບັບທີ 5 ເດືອນ 3 ປີ 2010

# ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງການລົງທືນຂອງລັດ

Project for Enhancing Capacity in Public Investment Program (PIP) Management (PCAP2)


ເນື້ອໃນຫຼັກ

- ພິເສດ **We' ve Done it!** -ການຝຶກອົບມຮົມການຄຸ້ມຄອງ PIP ທີ່ມີຜູ້ເຂົ້າຮ່ວມ 862 ຄົນ-
- ການຈັດຝຶກອົບຮົມ ແລະ ການນຳໃຊ້ເຄື່ອງມືຄຸ້ມຄອງ PIP
- ອີກອັນໜຶ່ງ, ການຝຶກອົບຮົມການຄຸ້ມຄອງທາງດ້ານການເງິນ


## ພິເສດ We've Done It!
## —ການຝຶກອົບຮົມການຄຸ້ມຄອງ PIP ທີ່ມີຜູ້ເຂົ້າຮ່ວມ 862 ຄົນ—

ໂຄງການ PCAP2 , ເປົ້າໝາຍ1 : ເພື່ອໃຫ້ 「ພ/ງກົມຫຼືພະແນກແຜນການຂອງກະຊວງ ອົງການ ທັງສູນກາງແລະທຸກແຂວງໄດ້ຍົກລະດັບຄວາມຮູ້ພື້ນຖານແລະວິຊາການທາງດ້ານການຄຸ້ມຄອງ PIP」 ດ້ວຍການຈັດການຝຶກອົບຮົມທີ່ກ່ຽວກັບ 「ການຄຸ້ມຄອງ PIP」 ໃນທົ່ວປະເທດ.

「ການຄຸ້ມຄອງ PIP」 ແມ່ນໄດ້ຖືກດຳເນີນມາແຕ່ເດືອນ11ປີ2009 ຫາເດືອນ1ປີ2010 ຊຶ່ງໃຊ້ເວລາທັງໝົດ3ເດືອນ, ກວມເອົາ16ແຂວງແລະນະຄອນຫຼວງວຽງຈັນ. ໃນນັ້ນ ຄູຝຶກແມ່ນມີທັງໝົດ 14 ທ່ານຊຶ່ງມາຈາກກົມປະເມີນ MPI ກົມຮ່ວມມືສາກົນ ກົມແຜນການ, ນອກຈາກນີ້ກໍ່ມີຜູ້ປະສານງານໂຄງການການຝຶກອົບຮົມການຄຸ້ມຄອງ ຕະຫຼອດທັງພະນັກງານກົມຈັດຕັ້ງອີກຕື່ມຈຳນວນ 6ທ່ານ. ເໝືອນດັ່ງທີ່ໄດ້ກ່າວໄວ້ໃນສະບັບກ່ອນໜ້ານີ້, ປີນີ້ພວກເຮົາຈະໄດ້ມີແຜນຂະຫຍາຍຫົວຂໍ້ໃນການຝຶກອົບຮົມໃຫ້ຫຼາກຫຼາຍແລະເລິກເຊິ່ງຂື້ນອີກ, ຄູຝຶກໄດ້ຖືກສ້າງມານັ້ນກໍ່ມີຄວາມຊຳນານງານຂື້ນຫຼາຍ, ດັ່ງນັ້ນ ພວກເຮົາຈຶ່ງຄາດຫວັງວ່າ ການຝຶກອົບຮົມທັງໝົດນັ້ນ ຈະມີປະສິດຕິຜົນໃນການຄຸ້ມຄອງວຽກງານນີ້ໄດ້ເປັນຢ່າງດີ.



(ຮູບຖ່າຍ) ຄູຝຶກ MPI ແລະ ຜູ້ເຂົ້າຮ່ວມຈາກກະຊວງ ກົມ ແລະພະແນກທີ່ກ່ຽວຂ້ອງ

ໃນການຝຶກອົບຮົມ ຜູ້ທີ່ກ່ຽວຂ້ອງກັບ PIP ຈຳນວນ 862 ຄົນ ຈາກທຸກແຂວງ ແລະກະຊວງຕ່າງໆ (ສ່ວນຫຼາຍແມ່ນພ/ງ PIP ຂອງກົມແລະພະແນກແຜນການ) ເຂົ້າຮ່ວມເພື່ອຮ່ຳຮຽນເອົາວິທີການຄຸ້ມຄອງ PIP ທັງ 7 ປະການ. ຈາກການປະເມີນຜົນ ເຫັນວ່າຜູ້ເຂົ້າຮ່ວມແມ່ນມີຄວາມເພິ່ງພໍໃຈສູງ, 99% ມີຄວາມຄາດຫວັງທີ່ຈະນຳໄປໃຊ້ເພື່ອປັບປຸງການຄຸ້ມຄອງ PIP, ສ່ວນຫຼາຍເຂົາເຈົ້າໃຫ້ຄຳຕອບວ່າ "ມີປະໂຫຍດສູງຫຼາຍ" "ມີປະສິດຕິຜົນ" ເຫຼົ່ານີ້ເປັນຕົ້ນ.

ລະດັບຄວາມຮູ້ໃໝ່ທີ່ໄດ້ຮັບ ໂດຍສະເພາະແມ່ນວິທີຄຸ້ມຄອງທັງເຈັດນັ້ນ, ຜູ້ເຂົ້າຮ່ວມແມ່ນເຂົ້າໃຈເນື້ອຫາເປັນຢ່າງດີ ໃນນັ້ນມີ "ວິທີແລະຂັ້ນຕອນໃນການຂື້ນແຜນງົບປະມານເພື່ອກິດຈະກຳ PIP ແບບຕໍ່ເນື່ອງ", ເນື້ອຫາໃໝ່ "ການສຳລະແລະແກ້ໄຂໜີ້ສິນ" "ການຂໍງົບປະມານເພື່ອກິດຈະກຳ PIP ລະດັບເມືອງ" ແລະເນື້ອໃນອື່ນໆອີກໄດ້ເປັນຢ່າງດີ.

* ລາຍງານຕາມຜົນຂອງແບບສອບຖາມ (ແຂວງ ຫົວພັນ ຊຽງຂວາງ ວຽງຈັນ ບໍລິຄຳໄຊ ນະຄອນຫຼວງວຽງຈັນ)

ຕໍ່ໜ້າຕໍ່ໄປ

ຕໍ່ຈາກໜ້າກ່ອນ

• ຕາຕະລາງ 1 ອັດຕາການຕອບຖືກ ພາຍຫຼັງທີ່ໄດ້ຮັບການຝຶກອົບຮົມ •

| | | ຫົວຂໍ້ການຝຶກອົບຮົມທີ່ກ່ຽວຂ້ອງ | ຄໍາຖາມ | ຖືກ | ຜິດ |
|---|---|---|---|---|---|
| ຫົວຂໍ້ ທີ່ມີ ມາ ກ່ອນ | 1 | ວິທີການຂຽນບົດລາຍງານຄວາມຄືບໜ້າຂອງໂຄງການສືບຕໍ່ | Q5 | 81% | 19% |
| | 2 | ແບບຟອມ SPAS ຂອງໂຄງການສືບຕໍ່ | Q7 | 58% | 42% |
| | | | Q9 | 25% | 75% |
| | 3 | ການຄຸ້ມຄອງແຜນງານ | Q4 | 46% | 54% |
| | | | Q8 | 30% | 70% |
| | | | Q11 | 39% | 61% |
| | 4 | ການປະເມີນແບບປຽບທຽບ ( COMPASS) | Q3 | 43% | 57% |
| ຫົວຂໍ້ ໃໝ່ | 5 | ການຂຽນບົດລາຍງານຂອງການຊໍາລະໜີ້ສິນ | Q1 | 76% | 24% |
| | 6 | ການຄຸ້ມຄອງການລົງທຶນຂອງລັດ ຂັ້ນເມືອງ | Q2 | 81% | 19% |
| | | | Q12 | 90% | 10% |
| | 7 | ການຄຸ້ມຄອງທຶນສົມທົບ ODA | Q6 | 50% | 50% |
| | | | Q10 | 38% | 62% |

ໃນນັ້ນ, ສັງເກດໄດ້ວ່າ ຜູ້ເຂົ້າຮັບຝຶກອົບຮົມ ຍັງມີຄວາມສັບສົນກັບເລື່ອງ "ວິທີການຄຸ້ມຄອງແຜນງານ" ແລະ" ວິທີກວດສອບຫຼືຊີ້ວັດການຄຸ້ມຄອງການລົງທຶນຂອງລັດ ຂັ້ນເມືອງ", ຄືວ່າຍັງບໍ່ມີຄວາມເຂົ້າໃຈຄວາມແຕກຕ່າງລະຫວ່າງຄວາມມີຜົນແລະອັດຕາປະສິດຕິຜົນເທື່ອ (ເບິ່ງຕາຕະລາງ 1).

ບາດກ້າວຕໍ່ໄປຂອງ PCAP2 ກໍຄືການໃຫ້ຜູ້ທີ່ໄດ້ເຂົ້າຮ່ວມຝຶກອົບຮົມທັງໝົດ ໄດ້ນໍາໃຊ້ຄວາມຮູ້ທີ່ໄດ້ມານັ້ນເຂົ້າໃນໜ້າວຽກຕົວຈິງຂອງຕົນ, ເຊັ່ນການຂື້ນແຜນເພື່ອດໍາເນີນ PIP ແລະການຄາດຫວັງຜົນ, ຄືແຕ່ທ້າຍເດືອນ 2 ຫາ ເດືອນ 3 ຈະມີແຜນໃນການການຝຶກອົບຮົມກັບບ່ອນເຮັດວຽກ (OJT). ຜົນຂອງມັນຄາດວ່າຈະນໍາມາໃຫ້ທ່ານໄດ້ຮັບຊາບໃນສະບັບໜ້າ. ຄິດວ່າຕ້ອງມີຂ່າວດີມາຕ້ອນທ່ານຢ່າງແນ່ນອນ. (ຜູ້ຂຽນ: ຮິລະໂຍຊິ)



ສະພາບການຝຶກອົບຮົມທີ່ແຂວງຜົ້ງສາລີ



ການປະກາດຜົນການປະເມີນກິດຈະກໍາ PIP / ຜູ້ເຂົ້າຮ່ວມຈາກກະຊວງ ຄຂປກ

## ການຈັດຝຶກອົບຮົມ ແລະ ການນໍາໃຊ້ເຄື່ອງມືຄຸ້ມຄອງ PIP

ຂ້າພະເຈົ້າ ພູຂົງ ບັນນະວົງ ຮອງຫົວໜ້າກົມປະເມີນຜົນ, ກະຊວງ ແຜນການ ແລະ ການລົງທຶນ ໃນນາມຜູ້ໜຶ່ງທີ່ມີສ່ວນຮ່ວມໃນການນໍາພາການຈັດຕັ້ງປະຕິບັດຝຶກອົບຮົມການຄຸ້ມຄອງການລົງທຶນຂອງລັດ. ເຫັນວ່ານັບຮອດປະຈຸບັນພວກເຮົາໄດ້ສໍາເລັດຈັດຝຶກອົບຮົມກ່ຽວກັບການຄຸ້ມຄອງການລົງທຶນຂອງລັດໃຫ້ທຸກກະຊວງ, ອົງການ ແລະ ທ້ອງຖິ່ນ (ຂັ້ນແຂວງ). ພວກເຮົາໄດ້ມີຫລັກສູດ, ແບບຟອມ ແລະ ບົດແນະນໍາຕ່າງໆອັນເປັນເຄື່ອງມືທີ່ສໍາຄັນໃນການຄຸ້ມຄອງການລົງທຶນຂອງລັດທີ່ມີລັກສະນະຄົບຊຸດກວ່າເມື່ອທຽບໃສ່ໄລຍະກອນ. ເຄື່ອງມືດັ່ງກ່າວມີລັກສະນະວິທະຍາສາດ ສະດວກໃນການນໍາໃຊ້ ແລະ ໄດ້ດັດປັບໃຫ້ແທດເໝາະກັບເງື່ອນໄຂຕົວຈິງຂອງທຸກລະດັບໂດຍສະເພາະແມ່ນຂັ້ນເມືອງ ແລະ ເຂດຈຸດສຸມ. ສິ່ງດັ່ງກ່າວຈະຊ່ວຍໃຫ້ການຄຸ້ມຄອງການລົງທຶນຂອງລັດມີຄວາມສະດວກ ແລະ ເປັນລະບົບຂື້ນກວ່າເກົ່າ. ພ້ອມນີ້ສະພາແຫ່ງຊາດກໍ່ໄດ້ຮັບຮອງກົດໝາຍວ່າດ້ວຍການລົງທຶນຂອງລັດຊຶ່ງເປັນນິຕິກໍາລະດັບສູງທີ່ຈະເປັນເຄື່ອງມືອັນສັກສິດໃນການຄຸ້ມຄອງການລົງທຶນຂອງລັດໃຫ້ມີປະສິດທິພາບປະສິດທິຜົນຂື້ນກວ່າເກົ່າ. ສິ່ງທີ່ຈະຕ້ອງໄດ້ເອົາໃຈໃສ່ໃນຕໍ່ໜ້ານີ້ແມ່ນການສ້າງດໍາລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ, ການໂຄສະນາເຜີຍ ແຜ່ກົດໝາຍ ແລະ ດໍາລັດດັ່ງກ່າວໃຫ້ທົ່ວເຖິງ ເພື່ອແນ່ໃສ່ການຈັດຕັ້ງປະຕິບັດການຄຸ້ມຄອງການລົງທຶນຂອງລັດໃຫ້ມີປະສິດທິພາບປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບ ກົດໝາຍ.

ສໍາລັບຫລັກສູດຝຶກອົບຮົມກ່ຽວກັບການຄຸ້ມຄອງການລົງທຶນຂອງລັດຍັງຈະຕ້ອງໄດ້ສືບຕໍ່ປັບປຸງໃຫ້ສົມບູນຂື້ນເລື້ອຍໆ ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ, ຈັງຫວະການພັດທະນາເສດຖະກິດ - ສັງຄົມ ແລະ ຄວາມຕ້ອງການຕົວຈິງໃນແຕ່ລະໄລຍະ ເປັນຕົ້ນແມ່ນການຫັນການຄຸ້ມຄອງການລົງທຶນໄປສູ່ຜົນຮັບຂອງການພັດທະນາ (Managing for Development Results ຫຼື Results Based Management) ໂດຍຈະຕ້ອງໄດ້ເອົາໃຈໃສ່ວຽກງານການຕິດຕາມ ແລະ ປະເມີນ ຊຶ່ງເປັນປັດໃຈທີ່ສໍາຄັນທີ່ຈະຊ່ວຍໃຫ້ວຽກງານການຄຸ້ມຄອງການລົງທຶນຂອງລັດມີປະສິດທິພາບ ແລະ ປະສິດທິຜົນຍິ່ງໆຂື້ນ.

# ທີມງານ MPI ແບບປະສົມ

ຈຸດເດັ່ນຂອງການຈັດຝຶກອົບຮົມໃນຄັ້ງນີ້ແມ່ນການເຂົ້າຮ່ວມຂອງກົມຮ່ວມມືສາກົນ(DIC). ກ່ອນໜ້ານີ້, ຝ່າຍທີ່ເຂົ້າຮ່ວມແລະ ເປັນເຈົ້າການກໍມີກົມປະເມີນຜົນ (DOE) ແລະ ກົມແຜນການ (DOP) ເທົ່ານັ້ນ. ເມື່ອມີການເຂົ້າຮ່ວມຂອງກົມຮ່ວມມືສາກົນຄືແນວນີ້, ກໍ່ໄດ້ກາຍມາເປັນສາມທີມງານຮ່ວມທີ່ສຳຄັນ ໃນການປະຕິບັດວຽກງານການຄຸ້ມຄອງດັ່ງກ່າວ.

ພະນັກງານຈາກ DIC ສ່ວນໃຫຍ່ແມ່ນຮັບຜິດຊອບການຝຶກອົບຮົມທີ່ກ່ຽວກັບການຂຶ້ນແຜນງົບປະມານODA. ເພາະເປັນຜູ້ທີ່ມີປະສົບການໃນການເຮັດວຽກ ເຂົ້າຮ່ວມເປັນຄູຝຶກຄືແນວນີ້ ຈຶ່ງເຮັດໃຫ້ນັກສຳມະນາກອນຮັບບົດຮຽນໄດ້ງ່າຍແລະເປັນປະໂຫຍດໃຫ້ແກ່ການນຳໃຊ້ຕົວຈິງ, ດັ່ງນັ້ນ ຈຶ່ງເວົ້າໄດ້ວ່າມັນໄດ້ກໍ່ໃຫ້ເກີດທີມຝຶກອົບຮົມແບບປະສົມທີ່ມີປະສິດຕິພາບຂຶ້ນມາ ແລະຖືວ່າເປັນຜົນງານຂອງPCAP2 ກໍວ່າໄດ້.

ຄູຝຶກຈາກ 3 ພາກສ່ວນດັ່ງກ່າວ ກໍຈະສືບຕໍ່ເປັນເຈົ້າການໃນການຝຶກອົບຮົມການຄຸ້ມຄອງ PIP ອີກຕໍ່ໄປ, ແລະຄາດວ່າຈະກາຍເປັນແມ່ແຮງອັນສຳຄັນໃນການສ້າງຄວາມເຂັ້ມແຂງຂອງ MPI. ສູ້ໆໆ ! ຄູຝຶກ MPI ກ້າວໄປ !!



ທ່ານ ຄຳພາຍ ວິໄລທົງ ຮອງຫົວໜ້າກົມ DIC,ມອບລາງວັນໃຫ້ຜູ້ເຂົ້າຮ່ວມ

(ຜູ້ຂຽນ: ນະກາຕະ)

## ແນະນຳເຈົ້າໜ້າທີ່ JICA ຄົນໃໝ່ ຜູ້ຊຶ່ງຮັບຜິດຊອບໂຄງການ PCAP2

### ແຕ່ເດືອນ 2 ປີ 2010 ເປັນຕົ້ນມາ ທ່ານນາງຄິມີຣະ ມາຊາໂກະ ໄດ້ມາປະຈຳຢູ່ຫ້ອງການ JICA ລາວ

ຍິນດີທີ່ໄດ້ຮູ້ຈັກ. ຂ້າພະເຈົ້າ ຄິມີຣະ ມາຊາໂກະ, ໄດ້ມາສືບຕໍ່ການເຮັດວຽກຜູ້ປະສານງານໂຄງການແທນທ່ານໂຢຊິມີຣະຊຶ່ງຮັບຜິດຊອບ PCAP2 ໃນເມື່ອກ່ອນ.




ຄວາມຈິງເມື່ອງເດືອນ 11 ປີກາຍນີ້, ຂ້າພະເຈົ້າໄດ້ມາເຮັດວຽກຢູ່ທີ່ນີ້, ແລະໄດ້ເຮັດໃນຂົງເຂດການຮ່ວມມືດ້ານວິຊາການທາງຂົງເຂດການປົກຄອງ"ໂຄງການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງການເງິນຂອງລັດກະຊວງການເງິນ" ຊຶ່ງຖືວ່າເປັນຂົງເຂດດຽວກັນກັບPCAP2. ໃນໄລຍະດັ່ງກ່າວນັ້ນຂ້າພະເຈົ້າກໍໄດ້ຂໍ້ມູນອ້າງອີງບາງຢ່າງຈາກ PCAP2 ອີກດ້ວຍ. ຕໍ່ໄປນີ້ຈະໄດ້ຂໍເຮັດວຽກຮ່ວມກັບພວກທ່ານຢ່າງໃກ້ສິດຂຶ້ນອີກ.

ໃນລະຫວ່າງກາງເດືອນ 2 ຜ່ານມານັ້ນ, ພວກເຮົາໄດ້ຈັດບັ້ນຝຶກອົບຮົມທົ່ວປະເທດຄັ້ງສຸດທ້າຍໂດຍມີຜູ້ແທນຈາກກະຊວງ ສຳນັກງານອ້ອມຂ້າງສູນກາງເຂົ້າຮ່ວມ, ໃນນັ້ນພະນັກງານ MPI ໄດ້ສະແດງໃຫ້ເຫັນຄວາມກ້າວໜ້າແລະຄວາມເປັນເຈົ້າການໃນວຽກງານດັ່ງກ່າວຊຶ່ງນີ້ກໍນັບວ່າເປັນຜົນງານອັນພົ້ນເດັ່ນຂອງໂຄງການທີ່ພວກເຮົາໄດ້ຮ່ວມແຮງກັນສ້າງມາ.

ໃນການຝຶກອົບຮົມ ພະນັກງານລັດເຮົາຈາກ ກະຊວງສຳນັກງານສູນກາງເຫຼົ່ານັ້ນ, ກໍໄດ້ຖົກຖຽງແລະໄດ້ຍົກບັນຫາຢ່າງສ້າງສັນຂຶ້ນມາສຶກສາຮ່ຳຮຽນແລະຖອດຖອນບົດຮຽນນຳກັນໂດຍດຳເນີນກັນເປັນຈຸ. ທັງໝົດນັ້ນໄດ້ກາຍເປັນຄວາມມຸ້ງຫວັງໃໝ່ອັນໜຶ່ງໃນການເຮັດໃຫ້ການຄຸ້ມຄອງລັດມີຄວາມເຂັ້ມແຂງ. ຈາກບົດຮຽນທີ່ໄດ້ມານັ້ນ, ຂໍໃຫ້ພວກທ່ານຈົ່ງນຳເອົາໄປນຳໃຊ້ຕົວຈິງໃຫ້ເກີດຜົນ, ທຸກສິ່ງຢ່າງທີ່ພອກພູນຂຶ້ນມາອັນເປັນສ່ວນໜຶ່ງຂອງໂຄງການນັ້ນ ຄົງຈະນຳໄປໃຊ້ໃນໜ້າວຽກການຄຸ້ມຄອງ ແຜນການ ແລະການເງິນຂອງພວກທ່ານໄດ້ເປັນຢ່າງດີ. ຂໍຝາກຝັງຄວາມຫວັງອັນນີ້ໄວ້ກັບທຸກທ່ານມານະທີ່ນີ້ດ້ວຍ.

# ຄູ່ມືທີ່ຕ້ອງນຳໃຊ້ເປັນເອກະພາບ“ ແຕ່ທົ່ງພຽງຮອດພູດອຍ ”



ທ່ານ ບັນລຸສິດ ຈິດຣູບໂລກ ກຳລັງບັນຍາຍ ການຝຶກອົບຮົມ PIP

ຂ້າພະເຈົ້າ ບັນລຸສິດ ຈິດຣູບໂລກ ຫົວໜ້າພະແນກຄົ້ນຄວ້າ ແລະ ຂໍ້ມູນຂ່າວສານ ກົມປະເມີນຜົນ, ກະຊວງແຜນການ ແລະການລົງທຶນມີຄວາມພູມໃຈທີ່ເປັນຜູ້ໜຶ່ງໃນການປະກອບສ່ວນພັດທະນາຄູ່ມືກ່ຽວກັບການຄຸ້ມຄອງການລົງທຶນຂອງລັດນັບແຕ່ຈຸດເລີ່ມຕົ້ນຂອງໂຄງການ PCAP ຈົນເຖິງປະຈຸບັນ. ຂໍສາລະພາບວ່າໄດ້ຮຽນຮູ້ຫລາຍຢ່າງຈາກຂະບວນການພັດທະນາຄູ່ມືນຳຊ່ຽວຊານ, ເພື່ອນຮ່ວມງານ ແລະ ນັກສຳມະນາກອນທີ່ເຂົ້າຮ່ວມຝຶກອົບຮົມໃນແຕ່ລະຄັ້ງ ລວມທັງການຮຽນຮູ້ຈາກສິ່ງຜິດພາດ. ໃນຖານະຫົວໜ້າທີມງານລົງຝຶກອົບຮົມຢູ່ຫລາຍໆແຂວງລວມທັງຂັ້ນສູນກາງ ຊຶ່ງແມ່ນຢູ່ໃນຊ່ວງການຝຶກທີ່ເລັ່ງດ່ວນ ແລະສຳຄັນເພື່ອແນໃສ່ຮັບໃຊ້ໃຫ້ແກ່ການສ້າງແຜນງົບປະມານປະຈຳສົກປີ 2010-2011 ບວກກັບການແນະນຳກົດໝາຍການຄຸ້ມຄອງການລົງທຶນລັດສະບັບທຳອິດ ແລະ ຢູ່ໃນໄລຍະ PCAP2 ໄດ້ມີການພັດທະນາຄູ່ມືໃໝ່ຫລາຍສະບັບ ລວມທັງການປັບປຸງຄູ່ມືໃນໄລຍະຜ່ານມາໃຫ້ແທດໝາະກັບການນຳໃຊ້ຕົວຈິງຍິ່ງຂຶ້ນ. ຜ່ານການຝຶກອົບຮົມໃນຄັ້ງນີ້ ຂ້າພະເຈົ້າສັງເກດເຫັນວ່າບັນດາຜູ້ເຂົ້າຮ່ວມທຸກຄົນໄດ້ເຫັນຄວາມສຳຄັນຂອງວຽກງານດັ່ງກ່າວກໍ່ຄືຄູ່ມື ຫລື ວິທີວິທະຍາໃນການຄຸ້ມຄອງການລົງທຶນຂອງລັດທີ່ນຳມາສະເໜີໃນຄັ້ງນີ້ຫລາຍກວ່າເກົ່າ. ບັນດາຄູ່ຝຶກໄດ້ສຸມໝົດຈິດໝົດໃຈໃນການຖ່າຍທອດຄວາມຮູ້ໂດຍບໍ່ຄຳນຶງເຖິງຄວາມອິດເມື່ອຍ ແລະ ຫວັ່ນໄຫວຕໍ່ອຸປະສັກໃດໆ ນັບທັງການເດີນທາງອັນຍາວໄກ ແລະ ຫ່າງໄກຄອບຄົວເປັນເດືອນໆ. ແຕ່ກໍ່ລີກລ້ຽງບໍ່ໄດບາງຂໍ້ຄົງຄ້າງເຊັ່ນ: ມີບາງແຫ່ງຜູ້ເຂົ້າຮ່ວມຝຶກກວ່າເຄິ່ງໜຶ່ງແມ່ນຄົນໃໝ່ເຮັດໃຫ້ກຳບັນຫາບໍ່ຕໍ່ເນື່ອງ, ການລຽບລຽງຄູ່ມືຍັງບໍ່ທັນເຕັມຮູ້, ມີບາງຈຸດ ອາດເຂົ້າໃຈຍາກບວກກັບຄູຝຶກບາງຄົນຍັງຮຽນຮູ້ໃໝ່ ຊຶ່ງອາດສົ່ງຜົນຕໍ່ການນຳສະເໜີບົດ ຮຽນບໍ່ໄດ້ດີເທົ່າທີ່ຄວນ. ແຕ່ຂ້າພະເຈົ້າໝັ້ນໃຈວ່າພາຍໃຕ້ການສືບຕໍ່ຊີ້ນຳຢ່າງໄກ້ສິດຂອງການນຳກະຊວງ, ການໃຫ້ການສະໜັບສະໜູນຂອງອົງການ JICA, PCAP2 ແລະການຮ່ວມມືທີ່ເປັນເອກະພາບຂອງທຸກພາກສ່ວນໃນການນຳໃຊ້ຄູ່ມືດັ່ງກ່າວ ເຂົ້າໃນການຄຸ້ມຄອງການລົງທຶນຂອງລັດໃນທົ່ວປະເທດພ້ອມກັບການເຄົາລົບ ແລະ ປະຕິບັດຢູ່ພາຍໃຕ້ກອບກົດໝາຍການລົງທຶນຂອງລັດ ແລ້ວທຸກໆໂຄງການລົງທຶນຈະນຳໄປສູ່ຄວາມມີປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງ ຊຶ່ງແມ່ນເປົ້າໝາຍຫລັກໃນການພັດທະນາຂອງພວກເຮົາ.

# ແບບຟອມສອບຖາມສຳລັບຄູຝຶກ

ທ. ທອງດີ ພົມມະວົງໄຊ
ກົມປະເມີນຜົນ



## ● ຄວາມຮູ້ສຶກຂອງຄູຝຶກ MPI, ການເຂົ້າຮ່ວມ OJT ●

ພາຍໃຕ້ໂຄງການ PCAP2 ເພື່ອເປັນການຕິດຕາມ “ການຝຶກອົບຮົມການຄຸ້ມຄອງ PIP” ”ການຄຸ້ມຄອງການເງິນ” ໃນລະຫວ່າງທ້າຍເດືອນ2ຫາເດືອນ3, ຄູຝຶກຈາກ MPI ໄດ້ໄປຈັດຕັ້ງການຝຶກອົບຮົມແບບກັບທີ່ (OJT) ໃຫ້ກະຊວງສຳນັກງານສູນກາງແລະແຂວງ. ຜົນຂອງການຈັດຝຶກອົບຮົມ OJT ນີ້ຈະໄດ້ນຳສະເໜີໃນສະບັບໜ້າ, ແຕ່ວ່າຢູ່ທີ່ນີ້ຈະສະເໜີໃຫ້ຮູ້ຜົນການສຳພາດ ຄວາມຮູ້ສຶກຂອງພະນັກງານ 2 ທ່ານທີ່ໄດ້ເຮັດວຽກດັ່ງກ່າວຢູ່ແຂວງຫຼວງນ້ຳທາມາໃຫ້ທ່ານຊາບ.

ທ. ສົມບັດ ໄຊຍະສິດ
ກົມປະເມີນຜົນ



| ◇ ຕອບ ◇ | ◆ ຖາມ ◆ | ◇ ຕອບ ◇ |
|---|---|---|
| A1: ແຂວງບໍ່ແກ້ວ, ແຂວງ ຫລວງນ້ຳທາ,ແຂວງ ອຸດົມໄຊ ແລະ ແຂວງ ຜົ້ງສາລີ | Q1: ຜ່ານການຝຶກອົບຮົມຫົວຂໍ້ການຄຸ້ມຄອງໂຄງການລົງທຶນຂອງລັດ + ການຝຶກອົບຮົມໜ້າວຽກກັບທີ່ (OJT) ແຂວງໃດທີ່ທ່ານໄດ້ໄປມາ? | A1: ແຂວງບໍ່ແກ້ວ, ແຂວງ ຫລວງນ້ຳທາ, ແຂວງ ອຸດົມໄຊ ແລະ ແຂວງ ຜົ້ງສາລີ ຮັບຜິດຊອບສະເພາະແຕ່ OJT ແລະໄດ້ແນະນຳຂະແໜງການກ່ຽວກັບ PIP Training ໃຫ້ບາງຂະແໜງການ, ແຕ່ສຳລັບການຝຶກອົບຮົມ PIP ແມ່ນບໍ່ໄດ້ເຂົ້າຮ່ວມ. |


(ອ່ານໜ້າຕໍ່ໄປ)

# ອີກເສົາຫຼັກໜຶ່ງຂອງໂຄງການ "ການຄຸ້ມຄອງການເງິນ"

● ການຝຶກອົບຮົມການຄຸ້ມຄອງທາງດ້ານການເງິນ ຊຶ່ງເປັນການຝຶກອົບຮົມໃໝ່ທີ່ມາເສີມໃສ່ການຄຸ້ມຄອງ PIP, ມີຜົນຫຍັງແດ່? ●



ການຝຶກອົບຮົມ: ການຄຸ້ມຄອງທາງດ້ານການເງິນການລົງທຶນລັດ

ໃນລະຫວ່າງກາງເດືອນ 1 ຜ່ານມາ, ໄດ້ມີການຈັດຝຶກອົບຮົມການຄຸ້ມຄອງການເງິນໃຫ້ກັບ DPI ຂອງທຸກໆແຂວງ. ຖືວ່າເປັນເທື່ອທຳອິດ ທີ່ຈັດຢູ່ພາຍໃຕ້ PCAP2, ຜູ້ເຂົ້າຮ່ວມມີຄວາມເຂົ້າໃຈໃນລະດັບສູງ ແຕ່ຍັງເປັນສິ່ງໆຫຼືວ່າລັງເລໃຈ ວ່າຈະເຮັດໄດ້ຫຼືບໍ່, ຫຼາຍໆທັດສະນະ ຍັງເປັນຫ່ວງວ່າໃນສັງຄົມລາວຍັງຄາບັນຫາຫຼາຍຢ່າງ.

ຈຸດສຸມຂອງການຝຶກອົບຮົມແມ່ນ ການເຮັດໃຫ້ໄລຍະການໃຊ້ຈ່າຍງົບປະມານໃຫ້ສັ້ນລົງ. ເພື່ອໃຫ້ບັນລຸ NSEDP ນັ້ນ ມັນຈຳເປັນຕ້ອງດຳເນີນຫຼາຍໂຄງການອີກຕື່ມ, ເຊັ່ນ ຖ້າດຳເນີນໂຄງການພັດທະນາທີ່ໃຫຍ່ເກີນງົບປະມານ ຈະພາໃຫ້ໂຄງການຖືກແກ່ຍາວ ແລະການໃຊ້ຈ່າຍກໍຈະສູງຂື້ນຕາມມາ. ດັ່ງນັ້ນ ມັນຈຳເປັນຕ້ອງໄດ້ສ້າງ ຂະບວນການປະກອບງົບປະມານໃໝ່ຂອງທຸກແຂວງ, ຊຶ່ງຕ້ອງກຳໃຫ້ໄດ້ສະພາບທາງດ້ານການເງິນຂອງແຂວງຕົນ, ຢ່າງນ້ອຍໆ ກໍຕ້ອງຫຼີກລ່ຽງໂຄງການທີ່ກາຍງົບປະມານຂອງຕົນເອງ. ແຕ່ລະແຂວງຍ່ອມມີການຄຸ້ມຄອງການເງິນມາໃນລະດັບໜຶ່ງແລ້ວ, ແຕ່ລະແຂວງອາດຈະມີບັນຫາຫຼາຍນ້ອຍແຕກຕ່າງກັນ, ດັ່ງນັ້ນ PCAP2 ຈຶ່ງໄດ້ພັດທະນາເຄື່ອງມືທີສາມາດໃຊ້ໄດ້ກັບທຸກແຂວງ.

ໃນການຝຶກອົບຮົມຄັ້ງຕໍ່ໄປ, ຈະໄດ້ໃຫ້ຜູ້ເຂົ້າຮ່ວມໄດ້ທົດລອງນຳໃຊ້ເຄື່ອງມືຄຸ້ມຄອງການເງິນໃໝ່ເຂົ້າໃນການຄິດໄລ່ ວິເຄາະບັນຫາຂອງແຂວງຕົນ, ແລະມຸ້ງເຮັດໃຫ້ເຂົາເຈົ້າເຂົ້າໃຈເຄື່ອງມືເຫຼົ່ານັ້ນໃຫ້ເລິກເຊິ່ງ. ຜູ້ເຂົ້າຮ່ວມຈາກຫຼາຍແຂວງໄດ້ໃຫ້ຄຳເຫັນວ່າ, ຢາກໃຫ້ມີການດຳເນີນການວິເຄາະການການເງິນທີ່ມີຄວາມລະອຽດໄປກ່ວາເຄື່ອງມືທີໄດ້ສ້າງຂື້ນມານັ້ນ, ແລະຢາກກຳໄດ້ຂອດບັນຫາທາງດ້ານການເງິນແຕ່ລະໆສ່ວນໃຫ້ໄດ້ເປັນຢ່າງດີ.

ຕາມທຳມະດາ, ແຕ່ເດືອນ 3 ຫາ ເດືອນ 4 ແຕ່ລະແຂວງຈະຕ້ອງມີການປະກອບແຜນງົບປະມານ, ແຕ່ລະພາກສ່ວນຈຶ່ງມີຄວາມຄາດຫວັງໃນການນຳໃຊ້ເຄື່ອງມືການຄຸ້ມຄອງການເງິນ ເພື່ອປັບປຸງສະພາບການເງິນໃຫ້ດີຂື້ນ. ນັບຕັ້ງແຕ່ເດືອນ 5 ເປັນຕົ້ນໄປ PCAP2 ຈະໄດ້ໄປຢ້ຽມຢາມທຸກແຂວງ ເພື່ອຕິດຕາມສະພາບຄວາມກ້າວໜ້າໃນການນຳໃຊ້ເຄື່ອງມືຄຸ້ມຄອງການເງິນ. (ຜູ້ຂຽນ: ຮັນດະ)

## ແບບຟອມສອບຖາມສຳລັບຄູຝຶກ (ຕໍ່ຈາກໜ້າ 4)

| (ທອງດີ ພົມມະວົງໄຊ) | | ( ສົມບັດ ໄຊຍະສິດ) |
|---|---|---|
| A2: ໝົດທຸກຫົວຂໍ້ ກ່ຽວກັບການຝຶກອົບຮົມກັບໜ້າວຽກ . | Q2: ຫົວຂໍ້ໃດ ຫຼື ບົດໃດທີ່ທ່ານໄດ້ຮັບຜິດຊອບໃນການຝຶກອົບຮົມ + ການຝຶກອົບຮົມໜ້າວຽກກັບທີ່ (OJT)? | A2: ບໍ່ມີ ຍ້ອນການຝຶກອົບຮົມ PIP ແມ່ນບໍ່ໄດ້ເຂົ້າຮ່ວມ. |
| A3: ການນຳໃຊ້ແບບຟອມໃນການຂຽນໂຄງການ ແລະ ການປະສານງານຂອງບັນດາພະແນກການຕ່າງໆ. | Q3: ຈຸດໃດທີ່ທ່ານເນັ້ນໃສ່ໃນການສອນໃຫ້ນັກສຳມະນາກອນສາມາດເຂົ້າໃຈໄດ້? | A3: ການນຳໃຊ້ແບບຟອມໃຫ້ຖືກກັບລັກສະນະໂຄງການ ເນັ້ນໜັກການຂຽນບົດລາຍງານຄວາມຄືບໜ້າ. |
| A4: ຊອກຮູ້ບັນຫາ ແລະ ປຶກສາຫາລືກັບທີມງານພ້ອມດ້ວຍໝູ່ຄະນະ ເພື່ອຊອກຫາວິທີແກ້ໄຂທີ່ຖືກຕ້ອງ ຈຶ່ງນຳໄປຈັດຕັ້ງ ແລະ ປະຕິບັດໃຫ້ເປັນເອກະພາບກັນຈິ່ງຈະມີປະສິດທິຜົນ. | Q 4: ທ່ານມີວິທີການພັດທະນາ/ປັບປຸງຕົວຂອງທ່ານເອງໄດ້ແນວໃດຜ່ານຈາກການຝຶກອົບຮົມ (PIP Training)? | A4: ຈະພະຍາຍາມຄົ້ນຄວ້າເອກະສານຄູ່ມືການຄຸ້ມຄອງ PIP ເພື່ອທີ່ຈະໄດ້ເປັນຄູຝຶກທີ່ຊຳນານໃນຕໍ່ໜ້າ. |
| A5: ແຂວງ ຫລວງນ້ຳທາ ຍ້ອນວິຊາການຂະແໜງປະເມີນຜົນເຂົ້າໃຈເຮັດວຽກວິຊາສະເພາະໄດ້ດີ ແລະເປັນເພື່ອນຮ່ວມງານທີ່ເປັນກັນເອງ. | Q5: ແຂວງໃດທີ່ທ່ານປະທັບໃຈຫຼາຍທີ່ສຸດ ແລະ ຍ້ອນຫຍັງ? | A5: ແຂວງ ຫລວງນ້ຳທາ ເພາະວ່າທາງທ້ອງຖິ່ນໄດ້ໃຫ້ການຕ້ອນຮັບທີ່ດີ ແລະ ເຂົ້າໃຈກ່ຽວກັບວຽກ PIP. |

# ແນະນຳໃຫ້ຮູ້ຈັກກັບພະນັກງານໃໝ່ຂອງໂຄງການ

## ● ທ່ານອານຸສັກ ຜູ້ຊຶ່ງກາຍເປັນເພື່ອນຜູ້ຫ້າວຫັນ ໃນ PCAP2 ໄດ້ເຂົ້າເຮັດວຽກມາແຕ່ ເດືອນ 12 ປີ 2010 ●

ຂ້າພະເຈົ້າ ອານຸສັກ ສົມສະນິດ ເປັນນັກສຶກສາທີ່ຮຽນຈົບ ປະລິນຍາໂທ ສາຂາບໍລິຫານທຸລະກິດ ໃນປີ 2002 ຢູ່ທີ່ສະຖາບັນ ການເມືອງ ແລະ ການປົກຄອງແຫ່ງຊາດ (NOSPA). ພາຍຫຼັງທີ່ຂ້າພະເຈົ້າໄດ້ຮຽນຈົບ ກໍ່ໄດ້ເລີ້ມຕົ້ນຊອກຫາຄວາມຮູ້ຮອບຕົວ ແລະ ສະສົມປະສົບການຕ່າງໆ ດ້ວຍການເຂົ້າເຮັດວຽກນຳ ບໍລິສັດຂອງເອກະຊົນ, ລັດວິສະຫະກິດ, ໂຄງການຂອງອົງການຈັດຕັ້ງສາກົນຕ່າງໆ ດັ່ງນັ້ນ, ຂ້າພະເຈົ້າເອງຈຶ່ງໄດ້ສະສົມຄວາມຮູ້ ແລະ ປະສົບການຕ່າງໆ ມາພໍສົມຄວນ ຈົນມາຮອດປັດຈຸບັນ ຂ້າພະເຈົ້າ ໄດ້ມາຮ່ວມງານກັບ ໂຄງການຍົກລະດັບຄວາມສາມາດທາງດ້ານການຄຸ້ມຄອງໂຄງການລົງທຶນຂອງລັດ ໄລຍະ2 (PCAP2). ຂ້າພະເຈົ້າຮູ້ສຶກວ່າຕົນເອງມັກເຮັດວຽກທາງດ້ານການພັດທະນາເປັນສ່ວນໃຫຍ່ ດັ່ງນັ້ນເມື່ອໄດ້ມາຮ່ວມງານກັບໂຄງການ PCAP2 ຈຶ່ງຮູ້ສຶກວ່າຕົນເອງໄດ້ເຮັດວຽກທີ່ຕົນມັກ ແລະ ກໍ່ຢາກເຮັດວຽກດ້ານການພັດທະນານີ້ຕໍ່ໄປ ເພາະຂ້າພະເຈົ້າຄິດວ່າ ນີ້ເປັນສ່ວນໜຶ່ງທີ່ຕົນເອງສາມາດຊ່ວຍໃນວຽກງານການພັດທະນາປະເທດຊາດໃຫ້ກ້າວໜ້າ ແລະ ຈະເລີນຮຸ່ງເຮືອງໄດ້ເໝືອນກັນ.

ສຸດທ້າຍນີ້ ຂໍອວຍພອນໃຫ້ຜູ້ອ່ານຈົ່ງມີຄວາມສຸກກັບວຽກງານທີ່ຕົນເອງກຳລັງເຮັດຢູ່ ແລະ ປະສົບຜົນສຳເລັດໃນສິ່ງທີ່ຫວັງເອົາໄວ້ທຸກຢ່າງເດີ...

ໂອກາດໜ້າພົບກັນໃໝ່ສະບາຍດີ J!



ທ່ານ ອານຸສັກ (ຊ້າຍ) ແລະຄອບຄົວ

# ປະຕິທິນໂຄງການ

## ການເຄື່ອນໄຫວຫຼັກແຕ່ເດືອນ 3 - 5 ປີ 2010

- ເດືອນ 3 : ຈັດຝຶກອົບຮົມແບບກັບທີ່ (OJT)
  ເປີດກອງປະຊຸມ JCC ຄັ້ງທີ 4
- ເດືອນ 4 : ຈັດຝຶກອົບຮົມປະເທດທີ 3
- ເດືອນ 5 : ປັບປຸງຄູ່ມື, ສ້າງປື້ມຕຳລາການຝຶກອົບຮົມ

## ແຜນການເຄື່ອນໄຫວ ເດືອນ 6 - 8 / ປີ 2010

- ເດືອນ 6 : ຝຶກອົບຮົມສ້າງຄູຝຶກ MPI, ປະເມີນຜົນ
- ເດືອນ 7 : ສືບຕໍ່ການຝຶກອົບຮົມ, ປະເມີນຜົນ
- ເດືອນ 8 : ຈັດກອງປະຊຸມ JCC ຄັ້ງທີ 5:
  ສິ້ນສຸດໂຄງການ.

## ● ກ່ຽວກັບກອງບັນນາທິການ ●



ໂດຍສືບຕໍ່ທ່ານນາກະມຸຣະ ຜູ້ຮັບຜິດຊອບຄົນກ່ອນ, ຂ້າພະເຈົ້າຊື່ວ່າ ອິຊິກະກິ ໄດ້ມາເຮັດໜ້າທີປະສານງານໂຄງການນີ້ຢູ່ລາວໄດ້ 1 ເດືອນແລ້ວ. ອາດຈະເປັນຄົນຍີ່ປຸ່ນທີ່ຜິວຄ້ຳແດ່, ຈຶ່ງມັກຖືກເວົ້າວ່າຄືຄົນຜັ່ງສາລີວ່າຊັ້ນ, ກໍເລີຍເຮັດວຽກເຂົ້າກັບບັນຍາກາດຕັ້ງແຕ່ຕົ້ນມາເລີຍ. ການທີ່ໄດ້ກິນອາຫານລາວອັນແຊບ, ການທີ່ໄດ້ເຮັດວຽກຮ່ວມກັບພະນັກງານລາວທີ່ເຕັມ“ໄປດ້ວຍຄວາມດຸໝັ່ນ, ນັ້ນທຸກໆມື້ໄດ້ເຮັດໃຫ້ຂ້າພະເຈົ້າໄດ້ດຳລົງຊີວິດແລະເຮັດວຽກດ້ວຍຄວາມມ່ວນຊື່ນ.

PCAP2 ໄດ້ກ້າວມາຮອດປີທີ່ 3 ແລະຖືວ່າເປັນເຄິ່ງຫຼັງຂອງໂຄງການກໍວ່າໄດ້, ມັນເໝືອນກັບວ່າດອກໄມ້ກຳລັງຈະເບັ່ງບານຄວາມຫວັງແລະຄວາມຕັ້ງໃຈຫຼາຍຢ່າງກໍກຳລັງຈະເກີດເປັນຜົນຂຶ້ນມາ, ພວກເຮົາຕ້ອງຕັ້ງໃຈອີກຕື່ມເພື່ອເຮັດໃຫ້ໂຄງການພວກເຮົາຈົບລົງດ້ວຍຜົນສຳເລັດອັນງົດງາມ.

ໂຄງການຫວັງວ່າຈະໄດ້ຮັບຄຳເຫັນ, ຄຳຊີ້ແນະ ແລະຄຳຕິຊົມຈາກບັນດາທ່ານເປັນຢ່າງດີ.

ຕິດຕໍ່ພວກເຮົາໄດ້ທີ່ :

- ຫ້ອງການໂຄງການ : Ministry of Planning and Investment, Souphanuvong Avenue, Vientiane
- ທີ່ຢູ່ທາງໄປຊະນີ້ : C/O JICA Laos Office, P.O. Box 3933, Souphanuvong Avenue, Vientiane
- ໂທລະສັບ (ຫ້ອງການ) : +856(0)21.243.687
- ອີເມລ : jica.pcap2@gmail.com

ໂຮມເພດຈ : http://www.jica.go.jp/project/laos/0700667/laos/index.html